University of Basel

# Gender and Labour in the Global South

Article – Laotian

This translation is for a better understanding of the English texts. We are very happy if you join the discussions. Please note that all contributions in the comment section and in the discussion steps need to be in English.

**The feminisation debates**

**Short description:**
ອ່ານວິທີທີ່ Christine Bigler
ນຳສະເຫນີການອະພິບາຍກ່ຽວກັບສະຕີນິຍົມເປັນກອບທີ່ສຳຄັນສຳລັບການປຶກສາຫາລືດ້ານຕະຫຼາດແຮງງານຈາກມູມມອງທາງເພດ.

**Content:**

Feminisation ເປັນຄຳທີ່ໃຊ້ໃນດ້ານເພດສຶກສາ. Feminisation ໝາຍເຖິງຈຳນວນຂອງແມ່ຍິງທີ່ເພີ່ມຂຶ້ນໃນຂົງເຂດສະເພາະໃດໜຶ່ງ: ອາດຢູ່ໃນດ້ານຂອງການເຮັດວຽກທີ່ໄດ້ຮັບຄ່າຈ້າງ, ໃນວິຊາສະເພາະ ຫຼື ໃນຂະແໜງການກິດຈະກຳຈຳເພາະໃດໜຶ່ງ. ໃນບົດຄວາມນີ້ ພວກເຮົາຈະອະທິບາຍແງ່ມູມຕ່າງໆຂອງເພດຍິງ (feminisation) ໃນຕະຫຼາດແຮງງານ. ການອະພິປາຍກ່ຽວກັບສະຕີນິຍົມ ເປັນກອບທີ່ສຳຄັນສຳລັບການປຶກສາຫາລືດ້ານຕະຫຼາດແຮງງານຈາກມູມມອງທາງເພດ. ຈຸດເລີ່ມຕົ້ນຂອງການອະພິປາຍກ່ຽວກັບສະຕີນິຍົມ ເລີ່ມຈາກການສົນທະນາໂຕ້ແຍ່ງຂອງຄຳວ່າ “ສະຕີແຫ່ງຄວາມທຸກຍາກຂອງເພດຍິງ” “feminisation of poverty”. (Pearce 1978) ທີ່ຖືກນຳໃຊ້ເພື່ອສະແດງໃຫ້ເຫັນເຖິງອັດຕາສ່ວນການເພີ່ມຂຶ້ນຂອງແມ່ຍິງ ແລະ ເດັກນ້ອຍໃນບັນດາຜູ້ຄົນທຸກຍາກໃນສະຫະລັດໃນຊຸມປີ 1970. ຄຳວ່າ “ສະຕີແຫ່ງຄວາມທຸກຍາກຂອງເພດຍິງ” “feminisation of poverty” ໄດ້ມຸ່ງໄປທີ່ອັດຕາຄວາມທຸກຍາກໂດຍແບ່ງຕາມເພດ ແລະ ຄວາມຈິງທີ່ວ່າຄວາມບໍ່ສະເໝີພາບທາງເສດຖະກິດລະຫວ່າງແມ່ຍິງ ແລະ ຜູ້ຊາຍໄດ້ເພີ່ມຂຶ້ນໃນລະຫວ່າງປີ 1950 ແລະ ປີ 2000 (McLanahan and Kelly 2006).

ຄຳນີ້ ມີອິດທິພົນຢ່າງແຮງກ້າໃນການອະພິປາຍກ່ຽວກັບເພດ ແລະ ການພັດທະນາ, ໂດຍສະເພາະໃນລະຫວ່າງ ແລະ ຫຼັງຈາກກອງປະຊຸມໃຫຍ່ຂອງໂລກກ່ຽວກັບແມ່ຍິງ ຄັ້ງທີ 4 ທີ່ກຸງປັກກິ່ງ ປີ 1995 (Chant 2010). ການອະພິປາຍ ກ່ຽວກັບຄວາມເສຍປຽບທາງເສດຖະກິດຂອງແມ່ຍິງ ໂດຍສະເພາະແມ່ນກ່ຽວກັບສະພາບການພັດທະນາ ນັ້ນບໍ່ແມ່ນເລື່ອງໃໝ່. ແຕ່ປະກົດການນີ້ໄດ້ຮັບການສົນທະນາໃຫ້ເປັນສ່ວນໜຶ່ງຂອງກະແສໂລກາພິວັດທີ່ກຳລັງດຳເນີນຢ່າງຕໍ່ເນື່ອງ ແລະ ການສັນນິຖານວ່າແມ່ຍິງ ຄິດເປັນ 70 ສ່ວນຮ້ອຍຂອງຜູ້ທຸກຍາກທັງໝົດໃນໂລກ (Chant 2010).

ຄຳວ່າ “ສະຕີແຫ່ງຄວາມທຸກຍາກຂອງເພດຍິງ” “feminisation of poverty” ໄດ້ຮັບການວິພາກວິຈານຢ່າງກວ້າງຂວາງ.

University of Basel

ນອກຈາກການອະທິບາຍກ່ຽວກັບຄວາມທຸກຍາກຂອງແມ່ຍິງແລ້ວ ຍັງມີສິ່ງໜ້າກັງວົນດ້ານອື່ນໆ ໃນແງ່ຂອງເພດຍິງເຊັ່ນ: ຕະຫຼາດແຮງງານ, ການກະສິກຳ ແລະ ການແບ່ງງານ. ຂະບວນການຂອງເພດຍິງເກີດຂຶ້ນເມື່ອແມ່ຍິງມີສ່ວນຮ່ວມໃນກິດຈະກຳຂອງຜູ້ຊາຍຫຼາຍຂຶ້ນ ເຊັ່ນ ແຮງງານທີ່ໄດ້ຮັບຄ່າຈ້າງ, ວຽກງານກະສິກຳ ຫຼື ການຮັບປະກັນຊີວິດການເປັນຢູ່ຂອງຄົວເຮືອນ (Razavi et al. 2012).

ເປັນຜົນມາຈາກການຫັນປ່ຽນອຸດສາຫະກຳ ແລະ ໂລກາພິວັດ, ການຮອມຕົວຂອງແມ່ຍິງເຂົ້າສູ່ຕະຫຼາດແຮງງານລາຍວັນ ໄດ້ເພີ່ມຂຶ້ນໃນລະຫວ່າງປີ 1980 ແລະ ປີ 2008 (Razavi et al. 2012; Kabeer and Natali 2013; World Bank Group 2009). ການເພີ່ມຂຶ້ນຂອງອັດຕາສ່ວນການຈ້າງງານຂອງແມ່ຍິງນີ້ ໄດ້ຮັບການອະທິບາຍເປັນເວລາຫຼາຍສິບປີ ວ່າເປັນ 'ຕະຫຼາດແຮງງານສະຕີນິຍົມ (feminisation of the labour market)' (Tejani and Milberg 2016; Kabeer and Natali 2013).

ແນວໃດກໍຕາມ, ການເຂົ້າຮ່ວມຕະຫຼາດແຮງງານໃນທົ່ວໂລກ ຂອງທັງແມ່ຍິງ ແລະ ຜູ້ຊາຍ ໄດ້ຫຼຸດລົງໃນຊຸມປີມໍ່ໆມານີ້ (International Labour Organization 2016), ແລະ ໃນບາງປະເທດ ແລະ ບາງຂະແໜງການ ທ່າອ່ຽງທີ່ນຳໄປສູ່ການຕໍ່ຕ້ານສະຕີແມ່ນໄດ້ຮັບການຍອມຮັບ (Tejani and Milberg 2016). ໃນຂະນະດຽວກັນ, ຍັງມີຫຼັກຖານທີ່ສະແດງເຖິງການແບ່ງແຍກທາງເພດຂອງຕະຫຼາດແຮງງານ ແລະ ຄວາມບໍ່ສະເໝີພາບລະຫວ່າງເພດໃນດ້ານລາຍໄດ້ນຳອີກ.

ສິ່ງເຫຼົ່ານີ້ເປັນປະກົດການທີ່ເກີດຂຶ້ນພ້ອມໆກັນກັບ ເພດຍິງ (the feminisation) ຂອງຕະຫຼາດແຮງງານ (Kabeer 2012; Razavi et al. 2012). ໃນກໍລະນີຂອງການກະສິກຳ, ຄຳວ່າ the feminisation ຈະໄດ້ຮັບການນຳໃຊ້ກໍຕໍ່ເມື່ອແມ່ຍິງມີບົດບາດໃນກິດຈະກຳຕ່າງໆຫຼາຍເກີນໄປ ເຊັ່ນ ເມື່ອຜູ້ຊາຍຍ້າຍເຂົ້າໄປໃນເຂດຕົວເມືອງ ແລະ ປະໃຫ້ແມ່ຍິງຢູ່ໃນເຂດຊົນນະບົດ (Deere and Doss 2006; Doss 2011).

ນອກຈາກນີ້ ແມ່ຍິງກຳລັງເຂົ້າສູ່ຕະຫຼາດແຮງງານທີ່ໄດ້ຮັບຄ່າຈ້າງ ຫຼື ຮັບໜ້າທີ່ຕໍ່ຈາກຜູ້ຊາຍໃນຄົວເຮືອນເຂດຊົນນະບົດ ໃນຂະນະທີ່ຍັງຄົງຮັບຜິດຊອບຕົ້ນຕໍຕໍ່ກັບວຽກງານການຈະເລີນພັນທີ່ບໍ່ໄດ້ຮັບຄ່າຈ້າງ (Doss 2011). ອັນນີ້ນຳໄປສູ່ພາລະວຽກງານທີ່ໜັກໜ່ວງ ແລະ ຂໍ້ຈຳກັດທາງດ້ານເວລາສຳລັບແມ່ຍິງ (Brauw et al. 2014). (Chant 2014) ໄດ້ພັນລະນາປະກົດການນີ້ວ່າ "ສະຕີແຫ່ງຄວາມຮັບຜິດຊອບ ແລະ ພັນທະຂອງເພດຍິງ" "feminisation of responsibility and obligations."

**ຂໍ້ມູນເພີ່ມເຕີມ:**

Chant, Sylvia (2015): The 'Feminization of Poverty': A Reflection 20 Years After Beijing. United Nations Research Institute for Social Development. https://www.unrisd.org/beijing+20-chant

Kovaleva, Marina (2021): Feminization of Agriculture and Its Impact on Sustainable Development. Gender Equality. SpringerLink. https://link.springer.com/referenceworkentry/10.1007%2F978-3-319-95687-9_92

University of Basel

MacKenzie, Christensen A. (2021): Feminization of Poverty: Causes and Implications. Gender Equality. SpringerLink. https://link.springer.com/referenceworkentry/10.1007/978-3-319-95687-9_6

## ເອກະສານອ້າງອີງ

Brauw, Alan de; Mueller, Valerie; Lee, Hak Lim (2014): The Role of Rural–Urban Migration in the Structural Transformation of Sub-Saharan Africa. In *World Development* 63, pp. 33–42. DOI: 10.1016/j.worlddev.2013.10.013.

Chant, Sylvia (2010): Gendered poverty across space and time: introduction and overview. In Sylvia Chant (Ed.): The International Handbook of Gender and Poverty. Concepts, Research, Policies. Glos: Edward Elgar Publishing Limited, pp. 1–26.

Chant, Sylvia (2014): Exploring the "feminisation of poverty" in relation to women's work and home-based enterprise in slums of the Global South. In *International Journal of Gender and Entrepreneurship* 6 (3), pp. 296–316. DOI: 10.1108/IJGE-09-2012-0035.

Deere, Carmen Diana; Doss, Cheryl R. (2006): The Gender Asset Gap. What Do We Know And Why Does It Matter. In *Feminist Economics* 12 (1-2), pp. 1–50.

Doss, Cherly (2011): The role of women in agriculture. ESA Working Paper No. 11-02. Rome.

International Labour Organization (2016): Women at Work. Trends 2016. Geneva.

Kabeer, Naila (2012): Women's economic empowerment and inclusive growth: labour markets and enterprise development. SIG WORKING PAPER 2012/1. School of Oriental and African Studies (2012), 3/28/2012, checked on 6/27/2012.

Razavi, Shahra; Arza, Camilla; Braunstein, Elissa; Cook, Sarah, Goulding, Kristine (2012): Gendered Impacts of Globalization. Employment and Social Protection. In *Gender and Development - Paper No. 16,* checked on 6/27/2012.